ສຸວັນນີ ໂຮມເຊັ້ນເຕີ ເຂົ້າຮ່ວມງານ ເປີດໂລກແຫ່ງການລົງທຶນປະຈຳປີ 2017

ໃນວັນທີ 22 ກໍລະກົດ 2017 ທີ່ທີ່ຜ່ານມາ ງານເປີດໂລກແຫ່ງການລົງທຶນປະຈຳປີ 2017 ພາຍໃຕ້ຫົວຂໍ້: ທຸລະກິດຍືນຍົງ ສ້າງຖານະໝັ້ນຄົງໃນຕະຫຼາດທຶນ ທີ່ສູນການຄ້າ ລາວ-ໄອເຕັກ ໂດຍການຈັດຂຶ້ນພາຍໃຕ້ການຮ່ວມມືລະຫວ່າງ ຕະຫຼາດຫຼັກຊັບ ລາວ(ຕລຊລ), ທະນາຄານແຫ່ງສປປ ລາວ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ບໍລິສັດຈົດທະບຽນ, ບໍລິສັດຫຼັກຊັບ, ບໍລິສັດກວດສອບ, ບໍລິສັດທີ່ປຶກສາທາງດ້ານກົດໝາຍ ແລະ ບັນດາບໍລິສັດເປົ້າໝາຍກຽມເຂົ້າຈົດທະບຽນ ຫຼາຍກວ່າ 30 ບໍລິສັດ. ທ່ານ ວັດດານາ ສຸຄະບັນດິດ ຮອງປະທານສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ ໄດ້ຮ່ວມຂຶ້ນກ່າວແລກປ່ຽນຄຳຄິດເຫັນໃນການດຳເນີນທຸລະກິດຂອງ ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ ກ່ອນ ແລະ ຫຼັງຈົດທະບຽນໃນຕະຫຼາດທຶນ.

ພາຍໃນງານໄດ້ຮັບກຽດເຂົ້າຮ່ວມເປັນປະທານໂດຍ ພະນະທ່ານ ສົມດີ ດວງດີ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງການເງິນ, ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ, ທ່ານ ນາງ ສາຍສະໝອນ ຈັນທະຈັກ, ຫົວໜ້າສຳນັກງານ ຄຄຊ, ທ່ານ ເພັດສະຖາພອນ ແກ້ວວິງວິຈິດ, ຫົວໜ້າຫ້ອງການ ທະນາຄານແຫ່ງ ສປປ ລາວ, ປະທານສະພາບໍລິຫານ ຕລຊລ, ທ່ານ ດຣ. ອາຄົມ ປຣະເສີດ, ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ ທະນາຄານແຫ່ງ ສປປ ລາວ, ສະມາຊິກສະພາບໍລິຫານ ຕລຊລ, ທ່ານ ດຣ. ສົມໄຊ ໄຫສະຫງວນວໍຣະກຸນ, ກຳມະການ ຕະຫຼາດຫຼັກຊັບແຫ່ງປະເທດໄທ, ປະທານສະພາບໍລິຫານ ບໍລິສັດ ເອັສ ເອັນ ຊີ ຟອມເມີ ຈຳກັດ (ມະຫາຊົນ) ແລະ ທ່ານ ດ່ອກ ຢຸນ ລີ, ຮອງຜູ້ອຳນວຍການໃຫຍ່ ຕລຊລ.









SOUVANNY HOME CENTER JOINS INVESTMENT GATEWAY 2017

Last 22nd July 2017, The investment Gateway 2017 under the topic: Businesses sustainable building of stability in the capital market was held at Lao ITECC under the joining between Lao securities Exchange (LSX), National Bank, Lao securities Commission Office, Listed companies, Securities companies, auditing companies, legal consult companies and the pre-registered companies target more than 30 companies. Mr. Waddana SOUKBANDITH Vice Chairman of the Board of directors and CEO of Souvanny Home Center Public Company joined to share idea of running business of SVN before and after of register in the capital market.

In honor of participating by H.E. Mr. Somdee DUANGDEE, Deputy Prime Minister, Minister of Finance, Chairman of the Board of directors of security management, Mrs. Saiysamone CHANTHAJUK , Head of Securities commission. Mr. Phetsathaphone KEOVONGVICHIT, Office Head of National Bank, Chairman of the Board of Directors of Lao securities Exchange, Dr. Ahkhom PARSERD, Department Head of financial institution of nation Bank, member of the Board of Directors of Lao securities Exchange, Dr. Somxai THAISANGUANVORRAKOUN, Committee of the Stock Exchange of Thailand, Chairman of the Board of Director of SNC FORMER PUBLIC COMPANY LIMITED and Mr. Dok Yune Lee, deputy director of LSX.







